ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0369. /ກງ

ນະຄອນຫຼວງວຽງຈັນ, ວັນທີ 04. ກຸມພາ 2020

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງ ຮູບແບບເອກະສານລາຍງານການເງິນ ແລະ ຜັງບັນຊີ ສໍາລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ

- ອີງຕາມ ກົດໝາຍວ່າດ້ວຍ ການບັນຊີ ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມດໍາລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 8 ພຶດສະພາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 530/ກງ, ລົງວັນທີ 26 ກຸມພາ 2016 ວ່າດ້ວຍ ການຮັບຮອງມາດຕະຖານການລາຍງານການເງິນ ສໍາລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ;
- ອີງຕາມ ການຄົ້ນຄ້ວາ ແລະ ນໍາສະເໜີ ຂອງສະພາທີ່ປຶກສາການບັນຊີ ສະບັບເລກທີ 001/ສບຊ, ລົງວັນທີ 31 ມັງກອນ 2020.

**ລັດຖະມົນຕີ ກະຊວງການເງິນ ຕົກລົງ:**

ມາດຕາ 1. ເຫັນດີຮັບຮອງເອົາ ຮູບແບບເອກະສານລາຍງານການເງິນ ແລະ ຜັງບັນຊີ ສໍາລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ເພື່ອເປັນພື້ນຖານໃຫ້ວິສາຫະກິດດັ່ງກ່າວ ໃນການຈັດຕັ້ງປະຕິບັດວຽກງານບັນຊີຂອງຕົນ.

ມາດຕາ 2. ໃບລາຍງານຜົນການດໍາເນີນງານ ຕ້ອງສ້າງ, ລາຍງານ ຕາມຂອດວຽກງານເປັນຫຼັກ ແລະ ເປີດເຜີຍຕາມລັກສະນະເນື້ອໃນ ຢູ່ໃນບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ.

ມາດຕາ 3. ມອບໃຫ້ກົມບັນຊີ ກະຊວງການເງິນ ເປັນເຈົ້າການໃນການເຜີຍແຜ່, ແນະນໍາ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ ໂດຍປະສານງານກັບພາກສ່ວນທີ່ກ່ຽວຂ້ອງ.

ມາດຕາ 4. ມອບໃຫ້ຫົວໜ່ວຍຖືບັນຊີວິສາຫະກິດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຮູບແບບເອກະສານລາຍງານການເງິນ ແລະ ຜັງບັນຊີ ສໍາລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຢ່າງເຂັ້ມງວດ ນັບແຕ່ປີ 2021 ເປັນຕົ້ນໄປ.

ມາດຕາ 5. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.
ຂໍ້ຕົກລົງ ແລະ ແຈ້ງການໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີກະຊວງການເງິນ**

ກະຊວງການເງິນ
ລັດຖະມົນຕີ

ສົມດີ ດວງດີ